ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ
ກົມສິລະປະ-ວັດທະນະທຳ
ກອງກາຍຍະສິນແຫ່ງຊາດ
ຄະນະຮັບຜິດຊອບໂຄງການ

ເລກທີ..319../ກສຊ
ນະຄອນຫຼວງວຽງຈັນ,ວັນທີ..2/4/2025..

## ໜັງສືແຈ້ງເຊີນປະມູນ

### ຈັດຊື້ອຸປະກອນເຄື່ອງເຕັກນິກ-ວິຊາການ ເພື່ອຮັບໃຊ້ການສະແດງກາງແຈ້ງຂອງກອງກາຍຍະສິນແຫ່ງຊາດ

- ອີງຕາມ ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບ ໂຄງການຈັດຊື້ອຸປະກອນເຄື່ອງເຕັກນິກ - ວິຊາການ ເພື່ອ ຮັບໃຊ້ການສະແດງກາງແຈ້ງຂອງກອງກາຍຍະສິນແຫ່ງຊາດ ສະບັບເລກທີ 259/ຖວທ, ລົງວັນທີ 18 ມີນາ 2025;
- ອີງຕາມ ແຈ້ງການ ແຈ້ງແຜນການລົງທຶນຂອງລັດປະຈໍາສົກປີ 2025 ສະບັບເລກທີ 07/ຖວທ, ລົງວັນທີ 27 ມັງກອນ 2025 ແລະ ໃບແຈ້ງໂຕເລກງົບປະມານການລົງທຶນຂອງລັດພາກ 67 ສະບັບເລກທີ 81/ຜກຮ.1, ລົງວັນທີ 27 ມັງກອນ 2025.

1. ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໄດ້ຮັບອະນຸມັດງົບປະມານລົງທຶນຂອງລັດ (ບ້ວງທຶນປົກກະຕິ)ແຜນປີ 2025 ໂຄງການຈັດຊື້ອຸປະກອນເຄື່ອງເຕັກນິກ-ວິຊາການເພື່ອຮັບໃຊ້ການສະແດງກາງແຈ້ງຂອງກອງກາຍ ຍະສິນແຫ່ງຊາດ. ສໍາລັບໄລຍະເວລາຂອງການຈັດຊື້ອຸປະກອນທັງໝົດແມ່ນບໍ່ໃຫ້ກາຍ 12 ເດືອນ ນັບຕັ້ງແຕ່ມື້ອອກໃບສັ່ງຊື້ສິນຄ້າ ແລະ ໃຫ້ຈັດຕັ້ງປະຕິບັດຈົນເຖິງມື້ກວດກາ ມອບ - ຮັບໂຄງການ;
2. ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຂໍເຊີນບັນດາ ບໍລິສັດ ທີ່ມີຄວາມສົນໃຈ ແລະ ມີຄຸນນະວຸທິເໝາະສົມເຂົ້າຍື່ນຊອງປະມູນການຈັດຊື້ອຸປະກອນເຄື່ອງເຕັກນິກ - ວິຊາການ ເພື່ອຮັບໃຊ້ການສະແດງກາງແຈ້ງຂອງ ກອງກາຍຍະສິນແຫ່ງຊາດ;
3. ໃນການປະມູນແມ່ນຈະດໍາເນີນການປະມູນຮູບແບບເປີດກວ້າງ ທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້ - ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
4. ການປະມູນແມ່ນອະນຸຍາດໃຫ້ທຸກໆ ບໍລິສັດທີ່ມີຄຸນນະວຸທິເໝາະສົມ, ມີໃບທະບຽນວິສາຫະກິດ, ທີ່ຖືກຕ້ອງຕາມກົດໝາຍ (ສໍາເນົາດ້ານຫຼັງມາພ້ອມ ແລະ ມີອະນຸຍາດດໍາເນີນທຸລະກິດທາງດ້ານການນໍາເຂົ້າອຸປະກອນໄຟຟ້າ ແລະ ເຄື່ອງໃຊ້ໄຟຟ້າເພື່ອຈໍາໜ່າຍພາຍໃນ ແລະ ສົ່ງອອກຕ່າງປະເທດ, ເຄື່ອງດົນຕີ, ເຄື່ອງສຽງເພື່ອຈໍາໜ່າຍພາຍໃນ ແລະ ສົ່ງອອກຕ່າງປະເທດ, ເຄື່ອງໃຊ້ຫ້ອງການອຸປະກອນໄອທີ ແລະ ອື່ນໆ ທີ່ກ່ຽວຂ້ອງກັບໂຄງການ), ມີໃບອະນຸຍາດດໍາເນີນວິສາຫະກິດໄຟຟ້າປະຈໍາປີ 2025, ແລະ ໃບຢັ້ງຢືນການມອບອາກອນປີ 2024;
5. ທຸກໆ ບໍລິສັດ ຕ້ອງປະກອບບົດບັນທຶກການກວດກາ ບັນຊີແບບຄົບຊຸດ ປະຈໍາປີ 2024 ອອກໂດຍກົມສ່ວຍສາອາ

ກອນປະຈຳປີ 2025 (ຍົກເວັ້ນບໍລິສັດເປີດໃໝ່) ແລະ ການເຄື່ອນໄຫວບັນຊີສຳຮອງ ບໍລິສັດ ໄລຍະ 03 ເດືອນຜ່ານມາວົງເງິນບໍ່ຫຼຸດ 5,000,000,000 ກີບ ຂຽນເປັນໂຕໜັງສື ( ຫ້າຕື້ກີບຖ້ວນ ) ແລະ ບັນຊີສຳຮອງຂອງ ບໍລິສັດ ບໍ່ໃຫ້ກາຍ 01 ອາທິດ ກ່ອນມື້ເປີດຊອງປະມູນ;

6. ບໍລິສັດທີ່ມີຄວາມສົນໃຈ ສາມາດຕິດຕໍ່ພົວພັນຊື້ຊອງປະມູນ ໄດ້ນຳຄະນະຮັບຜິດຊອບໂຄງການຢູ່ທີ່ ຫ້ອງການກອງກາຍຍະສິນແຫ່ງຊາດ(ຂະແໜງຄຸ້ມຄອງບໍລິຫານ)ສອບຖາມຂໍ້ມູນເພີ່ມເຕີມໂທ: 021212459; 020 9714 5505 ນາງ ວົງເພັດ ອຳພະວົງ. ການຂາຍຊອງປະມູນແມ່ນຈະເລີ່ມແຕ່ວັນທີ 04 ເມສາ 2025 (ຕາມໂມງລັດຖະການ) ໃນລາຄາ 2,000,000 ກີບ/ຊອງ, ຈຳນວນເງິນດັ່ງກ່າວນີ້ຈະບໍ່ມີການສົ່ງຄືນ ແລະ ວິທີການຊຳລະຕ້ອງຈ່າຍເປັນເງິນສົດ;
7. ທຸກໆ ຊອງປະມູນຕ້ອງໄດ້ປະກອບການຄ້ຳປະກັນການປະມູນດ້ວຍເງິນສົດ, ແຊັກ(ວີຊ້າ) ຫລື ໜັງສືຄ້ຳປະກັນການປະມູນຈາກທະນາຄານບໍ່ໃຫ້ຫຼຸດ 2% ( ສອງສ່ວນຮ້ອຍ ) ຂອງລາຄາປະມູນ ແລະ ໃສ່ມາພ້ອມຊອງປະມູນ;
8. ຊອງປະມູນຕ້ອງສົ່ງກ່ອນເວລາ 09:00 ໂມງຂອງວັນທີ 09 ພຶດສະພາ 2025 ທີ່ຫ້ອງປະຊຸມຊັ້ນ 01 ຂອງຕຶກກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ຖະໜົນເສດຖາທິລາດເລກທີ 01000, ຕູ້.ປນ.122 ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ຊອງປະມູນທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ. ທຸກຊອງປະມູນຈະໄດ້ເປີດໃນເວລາ 09:00 ໂມງຂອງວັນທີ 09 ພຶດສະພາ 2025 ທີ່ຫ້ອງປະຊຸມຊັ້ນ 01 ຂອງຕຶກກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໂດຍຊ່ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງ ບໍລິສັດ ເຂົ້າຮ່ວມ.

ເຊັນແທນ ຫົວໜ້າຄະນະຮັບຜິດຊອບໂຄງການ

ຮອງຄະນະຮັບຜິດຊອບໂຄງການ

ກອງກາຍຍະສິນແຫ່ງຊາດ

ວອນວິໄລ ລັດຖະຟ້າສະຫວ່າງ